**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງສຶກສາທິການ

# ແຜນຍຸດທະສາດ
# ການຮັບປະກັນຄຸນນະພາບການສຶກສາ
# 2011-2020

ນະຄອນຫລວງວຽງຈັນ, ມິຖຸນາ 2010

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສຳນັກງານນາຍົກລັດຖະມົນຕີ** **ເລກທີ: / ນຍ**

**ນະຄອນຫຼວງວຽງຈັນ, ວັນທີ...............**

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນຍຸດທະສາດ ການຮັບປະກັນຄຸນນະພາບການສຶກສາ 2011-2020

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ, ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003
- ອີງຕາມ ກົດໝາຍວ່າດ້ວຍການສຶກສາແຫ່ງ ສປປ ລາວ (ສະບັບປັບປຸງ), ສະບັບເລກທີ 04/ສພຊ, ລົງວັນທີ 03 ກໍລະກົດ 2007
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ, ສະບັບເລກທີ 62/ນຍ, ລົງວັນທີ 07 ເມສາ 2008
- ອີງຕາມ ດຳລັດວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ, ສະບັບເລກທີ 84/ນຍ, ລົງວັນທີ 01 ມີນາ 2007
- ອີງຕາມ ເອກະສານສະເໜີຂອງລັດຖະມົນຕີວ່າການກະຊວງສຶກສາທິການ ສະບັບເລກທີ................ ລົງວັນທີ...............2010

### ນາຍົກລັດຖະມົນຕີອອກດຳລັດ

ມາດຕາ 1: ຮັບຮອງ ແລະ ປະກາດໃຊ້ ແຜນຍຸດທະສາດວ່າດ້ວຍ ການຮັບປະກັນຄຸນນະພາບການສຶກສາ 2011-2020.

ມາດຕາ 2: ມອບໃຫ້ກະຊວງສຶກສາທິການເປັນເຈົ້າການ ປະສານສົມທົບກັບບັນດາພາກສ່ວນທີ່ກ່ຽວຂ້ອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ ແລະ ລາຍງານໃຫ້ລັດຖະບານຊາບແຕ່ລະໄລຍະ.

ມາດຕາ 3: ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫລວງ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 4: ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ.ລາວ

# ຄຳນຳ

ກອງປະຊຸມໃຫຍ່ຄັ້ງທີVIII ຂອງພັກໄດ້ວາງຄາດໝາຍໄວ້ວ່າ ຕ້ອງເຮັດໃຫ້ປະເທດຊາດ ຫລຸດພົ້ນອອກຈາກຄວາມດ້ອຍພັດທະນາພາຍໃນປີ2020, ມີປັດໃຈພື້ນຖານແຫ່ງການຫັນເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວ.

ເພື່ອບັນລຸຄາດໝາຍຂ້າງເທິງນັ້ນ, ຕ້ອງຖືເອົາການສຶກສາເປັນວຽກງານໃຈກາງ ຂອງການພັດທະນາຊັບພະຍາກອນມະນຸດ, ຮີບຮ້ອນດຳເນີນການປະຕິຮູບ ລະບົບການສຶກສາແຫ່ງຊາດ ໃຫ້ມີຄຸນນະພາບ ແລະ ມີມາດຕະຖານສູງຂຶ້ນ ຫຍັບມໍ່ເຂົ້າກັບພາກພື້ນ ແລະສາກົນ.

ແຜນຍຸດທະສາດ ການຮັບປະກັນຄຸນນະພາບສະບັບນີ້ ເປັນບ່ອນອີງ ແລະ ເປັນທິດທາງໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ພັດທະນາ ມາດຕະຖານຂອງຄຸນນະພາບການສຶກສາໃຫ້ທຸກຊັ້ນທຸກສາຍ, ພັດທະນາ ລະບົບແລະກົນໄກໃນການປະເມີນຄຸນນະພາບການສຶກສາ ທັງພາກລັດ ແລະ ພາກເອກະຊົນໃຫ້ມີປະສິດທິພາບ ແລະ ສອດຄ່ອງກັບແຜນປະຕິຮູບລະບົບການສຶກສາແຫ່ງຊາດ. ດ້ວຍແຜນຍຸດທະສາດນີ້ຈະເຮັດໃຫ້ການສຶກສາຂອງຊາດໄດ້ຮັບການພັດທະນາ ຢ່າງມີຄຸນນະພາບຕາມມາດຕະຖານຂອງຊາດ ໃນຂອບເຂດທົ່ວປະເທດ.

ແຜນຍຸດທະສາດນີ້ ໄດ້ຮ່າງຂຶ້ນບົນພື້ນຖານ ການຄົ້ນຄວ້າເອກະສານກ່ຽວກັບຄຸນນະພາບການສຶກສາຂອງຫລາຍໆປະເທດໃນພາກພື້ນ ແລະສາກົນ, ສົມທົບກັບບົດຮຽນດ້ານການຮັບປະກັນຄຸນນະພາບ ທີ່ໄດ້ໄປຖອດຖອນ ຈາກບັນດາປະເທດເພື່ອນມິດໃນຂອບເຂດອາຊຽນ. ນອກນັ້ນ, ແຜນຍຸດທະສາດນີ້, ຍັງໄດ້ຜ່ານຂະບວນການຄົ້ນຄ້ວາປຶກສາຫາລືຢ່າງລະອຽດ ກັບບັນດາພາກສ່ວນທີ່ກ່ຽວຂ້ອງ ແລະບັນດາຄູ່ຮ່ວມພັດທະນາ.

ໃນແຜນຍຸດທະສາດນີ້ ໄດ້ກຳນົດຈຸດໝາຍ, ຈຸດປະສົງ, ຫຼັກການ, ແລະ ຄາດໝາຍ ຂອງແຜນຍຸດທະສາດ. ໂດຍປະກອບດ້ວຍ 7 ຍຸດທະສາດຍ່ອຍ ແລະ 2ໄລຍະດຳເນີນງານຄື ໄລຍະທີ1 ປີ2011-2015 ແລະໄລຍະທີ2 ປີ2016-2020.

ທິດທາງລວມຂອງການຮັບປະກັນຄຸນນະພາບການສຶກສາ ເປັນລະບົບກົນໄກ ທີ່ມີການປະເມີນ , ປັບປຸງ ແລະ ຮັບຮອງຄຸນນະພາບການສຶກສາ. ໂດຍການປະເມີນປັດໃຈຕ່າງໆ ຕາມມາດຕະຖານທີ່ໄດ້ກຳນົດ, ປັດໃຈໃດທີ່ບໍ່ທັນໄດ້ມາດຕະຖານ ກໍ່ສະໜັບສະໜູນ ປັບປຸງໃຫ້ດີຂຶ້ນ, ເພື່ອໄດ້ຕາມເກນທີ່ກຳນົດ ແລ້ວກ້າວໄປເຖິງ ການຮັບຮອງຄຸນນະພາບ. ການກຳນົດມາດຕະຖານການສຶກສາ ໃນທຸກຊັ້ນທຸກສາຍ ແມ່ນສອດຄ່ອງກັບແຜນປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ສອດຄ່ອງກັບມາດຕະຖານ ຂອງພາກພື້ນ ແລະ ສາກົນ, ອີງໃສ່ປັດໃຈຫລັກຂອງຄຸນນະພາບການສຶກສາເຊັ່ນ: ຄູສອນ, ຜູ້ບໍລິຫານ, ຂະບວນການຮຽນ-ການສອນ, ຜົນການຮຽນຮູ້ຂອງຜູ້ຮຽນ, ຫລັກສູດ, ອາຄານສະຖານທີ່, ສິ່ງອຳນວຍຄວາມສະດວກ ແລະອື່ນໆ.

ການຮັບຮອງຄຸນນະພາບໃນລະບົບປະກັນຄຸນນະພາບ ເປັນການສ້າງຄວາມເຊື່ອໝັ້ນດ້ານຄຸນນະພາບ ຂອງສະຖານສຶກສາຕໍ່ສັງຄົມ ແລະ ທັງເປັນເງື່ອນໄຂໃຫ້ການສຶກສາລາວມີການພັດທະນາແນໃສ່ປັບປຸງ ລະບົບການສຶກສາແຫ່ງຊາດໃຫ້ໜັກແໜ້ນ ແລະ ມີການຂະຫຍາຍຕົວຮອບດ້ານ, ມີຄຸນ

ນະພາບດີຂຶ້ນ ແລະ ຫຍັບມໍ່ກັບມາດຕະຖານ ພາກພື້ນ ແລະ ສາກົນເທື່ອລະກ້າວ, ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຕ່ນີ້ເຖິງປີ2020.

# ສາລະບານ

**ເນື້ອໃນ** **ໜ້າ**


ພາກທີ I. ສະພາບລວມ ........ 1
1.1 ສະພາບການຈັດຕັ້ງປະຕິບັດ ໃນໄລຍະຜ່ານມາ ........ 1
1.2 ສະພາບບັນຫາ ........ 2
1.3 ຄວາມຈຳເປັນ ........ 2
ພາກທີ II. ແຜນຍຸດທະສາດ ........ 3
2.1 ຈຸດໝາຍລວມ ........ 3
2.2 ຄາດໝາຍລວມ ........ 3
2.3 ເນື້ອໃນຂອງແຜນຍຸດທະສາດ ........ 5
2.3.1 ປັບປຸງລະບົບການສອບເສັງ, ທົດສອບ ແລະແຂ່ງຂັນທາງດ້ານການສຶກສາ ........ 5
2.3.2 ພັດທະນາລະບົບຮັບປະກັນຄຸນນະພາບສຳລັບກ່ອນໄວຮຽນ ແລະ ສາມັນສຶກສາ ........ 5
2.3.3 ພັດທະນາລະບົບຮັບປະກັນຄຸນນະພາບສຳລັບສະຖານອາຊີວະສຶກສາ ........ 6
2.3.4 ພັດທະນາລະບົບຮັບປະກັນຄຸນນະພາບສຳລັບການສຶກສາຊັ້ນສູງ ........ 6
2.3.5 ພັດທະນາລະບົບຮັບປະກັນຄຸນນະພາບສຳລັບສະຖາບັນສ້າງຄູ ........ 6
2.3.6 ພັດທະນາລະບົບຮັບປະກັນຄຸນນະພາບສຳລັບສາຍນອກລະບົບ ........ 6
2.3.7 ພັດທະນາຂອບຄ່າຍມາດຕະຖານຄຸນວຸດທິ ........ 6
ພາກທີ III. ແຜນດຳເນີນງານ ........ 7
ພາກທີ IV. ວິທີການໃນການຈັດຕັ້ງປະຕິບັດ ........ 11

# ພາກທີ I. ສະພາບລວມ

## 1.1 ສະພາບການຈັດຕັ້ງປະຕິບັດ ໃນໄລຍະຜ່ານມາ

ກົດໝາຍການສຶກສາ ສະບັບປັບປຸງ, ໃນມາດຕາ 4 ນະໂຍບາຍກ່ຽວກັບການສຶກສາໄດ້ລະບຸວ່າ "ລັດຖືເອົາການສຶກສາ ເປັນວຽກງານໃຈກາງຂອງການພັດທະນາຊັບພະຍາກອນມະນຸດ, ຖືສຳຄັນການພັດທະນາຄົນ ທາງດ້ານຄຸນສົມບັດສິນທຳປະຕິວັດ, ຊີວະທັດ ແລະ ໂລກະທັດ ວິທະຍາສາດ ແລະ ກ້າວໜ້າ ...", "ລັດ ແລະ ສັງຄົມຕັ້ງໜ້າພັດທະນາການສຶກສາແຫ່ງຊາດ ໃຫ້ມີຄຸນນະພາບ, ສ້າງໂອກາດໃຫ້ປະຊາຊົນໄດ້ຮັບການສຶກສາຢ່າງທົ່ວເຖິງ ໂດຍສະເພາະປະຊາຊົນຢູ່ເຂດຫ່າງໄກສອກຫລີກ, ແມ່ຍິງ, ເດັກນ້ອຍ ແລະຜູ້ດ້ອຍໂອກາດ ...". ໃນມາດຕາ 5 ຫລັກການຂອງການສຶກສາໄດ້ກຳນົດໄວ້ວ່າ (1) ການສຶກສາຕ້ອງກຳເນີນໄປຕາມທິດສັງຄົມນິຍົມ, ມີລັກສະນະຊາດ, ມະຫາຊົນ, ວິທະຍາສາດ ແລະ ທັນສະໄໝ; (2) ການສຶກສາຕ້ອງຕິດພັນກັບອາຊີວະສຶກສາ; (3) ການສຶກສາຢູ່ໃນໂຮງຮຽນ ຕ້ອງໄປຄຽງຄູ່ກັບການສຶກສາອົບຮົມ ຢູ່ໃນຄອບຄົວ, ສັງຄົມ ແລະ ນອກໂຮງຮຽນ; (4) ການສຶກສາ ຕ້ອງຮັບປະກັນໃຫ້ທິດສະດີຕິດພັນກັບພຶດຕິກຳ, ການຮຽນຕ້ອງໄປຄຽງຄູ່ກັບການປະຕິບັດຕົວຈິງ, ການສຶກສາຕ້ອງຕິດພັນກັບການອອກແຮງງານ; (5) ການສຶກສາຕ້ອງຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ; (6) ການສຶກສາແຫ່ງຊາດ ຕ້ອງສອດຄ່ອງກັບການສຶກສາພາກພື້ນ ແລະສາກົນ.

ພ້ອມດຽວກັນ, ແຜນຍຸດທະສາດ ການປະຕິຮູບລະບົບການສຶກສາແຫ່ງຊາດ ປີ2006-2015 ໄດ້ຖືກກຳນົດ ເພື່ອແນໃສ່ປັບປຸງ ລະບົບການສຶກສາແຫ່ງຊາດ ໃຫ້ໜັກແໜ້ນ ແລະ ມີການຂະຫຍາຍຕົວຮອບດ້ານ, ມີຄຸນນະພາບດີຂຶ້ນ ແລະຫຍັບໃກ້ກັບມາດຕະຖານສາກົນເທື່ອລະກ້າວ, ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຕ່ນີ້ເຖິງປີ 2010, 2015 ແລະ 2020.

ໃນໄລຍະ20ກວ່າປີຜ່ານມາ, ຂະແໜງການສຶກສາ ໄດ້ມີການເຕີບໃຫຍ່ຂະຫຍາຍຕົວຫລາຍດ້ານ ທັງທາງດ້ານປະລິມານ ແລະ ຄຸນນະພາບ. ອັດຕາເຂົ້າຮຽນສຸດທິ ສຳລັບປະຖົມສຶກສາໄດ້ເພີ່ມຈາກ 63% ໃນປີ1990 ມາເປັນປະມານ 92% ໃນສົກຮຽນ2008-09. ອັດຕາເຂົ້າຮຽນລວມສຳລັບມັດທະຍົມຕົ້ນ ເພີ່ມຈາກ 30% ໃນປີ1990 ມາເປັນ 63% ແລະສຳລັບມັດທະຍົມປາຍ ເພີ່ມຂຶ້ນຢ່າງວ່ອງໄວຈາກ 26% ໃນປີ2003 ມາເປັນ 37% ໃນສົກຮຽນ2008-09. ສະຖານອາຊີວະສຶກສາ ໄດ້ຮັບການຂະຫຍາຍໄປທຸກແຂວງທົ່ວປະເທດ, ສຳລັບການສຶກສາຊັ້ນສູງ ອັດຕາສ່ວນຂອງນັກສຶກສາຕໍ່ປະຊາກອນ 100,000ຄົນ ປະຕິບັດໄດ້ ປະມານ 2,000 ໂດຍເພີ່ມຂຶ້ນຢ່າງວ່ອງໄວ ເມື່ອທຽບກັບ 650ຄົນ ໃນປີ 2004, ການລົງທຶນຂອງເອກະຊົນ ເພີ່ມຂຶ້ນຢ່າງຫລວງຫລາຍ ນັບຕັ້ງແຕ່ການສຶກສາຊັ້ນອານຸບານ ເຖິງການສຶກສາຊັ້ນສູງ. ການກໍ່ສ້າງ ແລະເຝິກອົບຮົມຄູ ໄດ້ຮັບການຂະຫຍາຍຢ່າງຕໍ່ເນື່ອງ ເພື່ອສະໜອງຄູສອນໃຫ້ຊັ້ນອານຸບານ, ປະຖົມ ແລະມັດທະຍົມ. ສຳລັບການສຶກສານອກໂຮງຮຽນ ໄດ້ບຳລຸງໃຫ້ປະຊາຊົນ ເຮັດໃຫ້ອັດຕາຄວາມຮູ້ໜັງສື ສຳລັບກຸ່ມເປົ້າໝາຍ 15-40ປີ ເພີ່ມຂຶ້ນເປັນ 84% ທຽບກັບ 76%ໃນປີ 2004.

### 1.2 ສະພາບບັນຫາ

ຄຽງຄູ່ກັບຜົນສໍາເລັດຂ້າງເທິງ ຍັງມີຫລາຍຂໍ້ຄົງຄ້າງ ແລະ ເປັນຈຸດອ່ອນ, ສໍາລັບຊັ້ນປະຖົມ ມີອັດຕາຄ້າງຫ້ອງ 16%, ອັດຕາປະລະ ປະມານ 8% ແລະ ອັດຕາຈົບຊັ້ນພຽງແຕ່ 64%. ອັດຕາຄ້າງຫ້ອງຂອງຂັ້ນປ.1 ມີເຖິງ31%, ຫລຸດໂຕນກັນເຖິງ 33% ຈາກ47% ໃນແຂວງທີ່ມີອັດຕາສູງສຸດ ກັບ14% ໃນແຂວງທີ່ມີອັດຕາຕໍ່າສຸດ. ສໍາລັບມັດທະຍົມ ເຖິງວ່າອັດຕາຄ້າງຫ້ອງຈະບໍ່ສູງປານໃດ ແຕ່ອັດຕາປະລະ ສໍາລັບຕອນຕົ້ນ 11% ແລະ ຕອນປາຍ 10%. ໂດຍຕົວເລກດັ່ງກ່າວ ກໍ່ມີຄວາມຫລຸດໂຕນກັນສູງ ລະຫວ່າງຕົວເມືອງ ແລະຊົນນະບົດ.

ຄຸນນະພາບຂອງການສຶກສາຍັງຕໍ່າ, ຍັງບໍ່ທັນຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ ແລະຕະຫລາດແຮງງານ ແລະ ບໍ່ທັນຫຍັບມໍ່ເຂົ້າກັບລະດັບສາກົນໄດ້ເທື່ອ.

ການລົບລ້າງຄວາມບໍ່ຮູ້ໜັງສື ມີລັກສະນະລົບລ້າງຕາມຂະບວນການ, ດ້ານຄຸນນະພາບບໍ່ທັນສູງ, ບໍ່ທັນມີລະບຽບຫລັກການ ເພື່ອທຽບໂອນລະຫວ່າງການສຶກສານອກລະບົບ ແລະ ໃນລະບົບ. ການຄຸ້ມຄອງການສຶກສາ ພາກເອກະຊົນບໍ່ທັນຮັດກຸມ ແລະ ບໍ່ທັນເຂັ້ມງວດ.

ລະບົບຮັບປະກັນຄຸນນະພາບ ທີ່ເປັນກົນໄກ ເພື່ອຕິດຕາມ ແລະ ປະເມີນຄຸນນະພາບການສຶກສາ ຍັງບໍ່ທັນຖືກຈັດຕັ້ງປະຕິບັດຢ່າງທົ່ວເຖິງ. ລວມທັງມາດຕະຖານຄຸນນະພາບຂອງແຕ່ລະຊັ້ນ ທີ່ເປັນເອກະພາບ ເພື່ອເປັນບ່ອນອີງ ໃນການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ.

### 1.3 ຄວາມຈໍາເປັນ

ກົດໝາຍການສຶກສາ ສະບັບປັບປຸງ, ໃນມາດຕາ 68-72 ໄດ້ລະບຸ ກ່ຽວກັບການກວດກາ ແລະປະເມີນຜົນການສຶກສາ ເພື່ອຄຸ້ມຄອງການສຶກສາ ໃຫ້ມີຄຸນນະພາບ ຕາມມາດຕະຖານ ແລະ ມີຄວາມຖືກຕ້ອງ ໂປ່ງໃສ.

ເພື່ອປະຕິບັດຕາມກົດໝາຍ ແລະ ແກ້ໄຂ ບັນດາສະພາບບັນຫາ ດັ່ງທີ່ໄດ້ກ່າວມານັ້ນ, ລະບົບຮັບປະກັນຄຸນນະພາບ ຈຶ່ງມີຄວາມຈໍາເປັນສໍາລັບ ການສຶກສາທຸກຊັ້ນທຸກສາຍ, ໂດຍປະກອບດ້ວຍ ມາດຕະຖານຄຸນນະພາບ ທີ່ເປັນເອກະພາບນໍາໃຊ້ ໃນຂອບເຂດທົ່ວປະເທດ, ກົນໄກ ໃນການປະເມີນຕົນເອງ, ປະເມີນພາຍໃນ ແລະ ປະເມີນພາຍນອກ ເພື່ອປັບປຸງຄຸນນະພາບ ແລະ ກ້າວໄປເຖິງການຮັບຮອງຄຸນນະພາບ.

ເນື່ອງຈາກ ຄຸນນະພາບ ເປັນບັນຫາທີ່ກ່ຽວພັນກັບຫລາຍພາກສ່ວນ ແລະ ວຽກງານຮັບປະກັນຄຸນນະພາບການສຶກສາ ກໍ່ເປັນໜ້າທີ່ຂອງທຸກພາກສ່ວນ ທີ່ມີສ່ວນຮ່ວມ. ການພັດທະນາແຜນຍຸດທະສາດ ຈຶ່ງເປັນສິ່ງທີ່ຈໍາເປັນ ເພື່ອໃຫ້ທຸກພາກສ່ວນ ເຫັນໄດ້ເຖິງທິດທາງຂອງການພັດທະນາ ແລະ ຄວາມຮັບຜິດຊອບຂອງຕົນ, ລວມໄປເຖິງການຮັບປະກັນ ທາງດ້ານງົບປະມານ ແລະ ບຸກຄະລາກອນ ເພື່ອຈັດຕັ້ງປະຕິບັດ ໃຫ້ປະກົດຜົນເປັນຈິງ.

# ພາກທີ II.    ແຜນຍຸດທະສາດ

## 2.1 ຈຸດໝາຍລວມ

- ໃຫ້ຄຸນນະພາບການສຶກສາຂອງຊາດ ໄດ້ຮັບການປັບປຸງໃຫ້ດີຂຶ້ນ, ໂດຍຜູ້ຮຽນບໍ່ວ່າຢູ່ທ້ອງຖິ່ນໃດ ກໍ່ຈະໄດ້ຮັບການສຶກສາທີ່ມີຄຸນນະພາບ ຕາມມາດຕະຖານຄຸນນະພາບການສຶກສາແຫ່ງຊາດ
- ໃຫ້ຜູ້ຮຽນ, ພໍ່ແມ່ປະຊາຊົນ ແລະຜູ້ມີສ່ວນຮ່ວມອື່ນໆໃນສັງຄົມ ມີຄວາມໝັ້ນໃຈຕໍ່ຄຸນນະພາບການສຶກສາຂອງຊາດ
- ສ້າງເງື່ອນໄຂສະດວກ ໃຫ້ຄຸນນະພາບການສຶກສາຂອງຊາດຫຍັບມໍ່ເຂົ້າກັບພາກພື້ນ ແລະສາກົນ

## 2.2 ຄາດໝາຍລວມ

(1) ປັບປຸງລະບົບການສອບເສັງ, ທົດສອບຄວາມຮູ້ນັກຮຽນ ແລະແຂ່ງຂັນທາງດ້ານການສຶກສາ ໃຫ້ໄປຕາມມາດຕະຖານການຮຽນຮູ້ ໃນແຕ່ລະຂັ້ນ ແຕ່ລະຊັ້ນ. ພັດທະນາມາດຕະຖານໂຄງສ້າງຫົວບົດສອບເສັງ ເຮັດໃຫ້ລະບົບການສອບເສັງຈົບຊັ້ນຂອງສາຍສາມັນ ມີຄວາມສອດຄ່ອງ ແລະຕໍ່ເນື່ອງ ນັບຕັ້ງແຕ່ປະຖົມ, ມັດທະຍົມຕົ້ນ, ມັດທະຍົມປາຍ ແລະ ການສອບເສັງເຂົ້າສະຖານສຶກສາຂອງລັດ. ເຮັດໃຫ້ລະບົບການສອບເສັງ ມີຄວາມໂປ່ງໃສ, ເປັນທຳ, ສ້າງເງື່ອນໄຂໃຫ້ນັກຮຽນ ມີຄວາມຕັ້ງໃຈຮ່ຳຮຽນຢ່າງສະໝ່ຳສະເໝີ. ຍົກສູງ ມາດຕະຖານຂອງການແຂ່ງຂັນ ທາງດ້ານການສຶກສາ ເທື່ອລະກ້າວເພື່ອຫຍັບມໍ່ ຄຸນນະພາບເຂົ້າຫາພາກພື້ນ ແລະ ສາກົນ.

(2) ພັດທະນາ ລະບົບຮັບປະກັນຄຸນນະພາບ ສຳລັບສາຍສາມັນ ແລະ ກ່ອນໄວຮຽນ, ໃຫ້ມີມາດຕະຖານຄຸນນະພາບ, ມີກົນໄກການປະເມີນຄຸນນະພາບ ນັບຕັ້ງແຕ່ ການປະເມີນຕົນເອງຂອງໂຮງຮຽນ; ການປະເມີນພາຍໃນຂອງໜ່ວຍງານຕົ້ນສັງກັດ: ສຶກສາທິການເມືອງ ແລະ ສຶກສາທິການແຂວງ; ການປະເມີນພາຍນອກຂອງພາກສ່ວນຮັບຮອງຄຸນນະພາບການສຶກສາ. ພ້ອມທັງກົນໄກ ເພື່ອຕອບສະໜອງງົບປະມານ ໃຫ້ແກ່ແຜນພັດທະນາຄຸນນະພາບ ເປັນເງື່ອນໄຂ ໃຫ້ມີການພັດທະນາຄຸນນະພາບຢ່າງຕໍ່ເນື່ອງ. ມາດຕະຖານຄວນປະກອບມາຈາກບັນດາປັດໄຈຫລັກຂອງຄຸນນະພາບການສຶກສາ ທີ່ມີລັກສະນະເປັນການປ້ອນເຂົ້າ, ຂະບວນການ, ຜົນຜະລິດ ເຊັ່ນ: ຄູສອນ, ຜູ້ບໍລິຫານ, ອຸປະກອນການຮຽນການສອນ, ອາຄານສະຖານທີ່, ສິ່ງອຳນວຍຄວາມສະດວກອື່ນໆ, ຫລັກສູດ, ຂະບວນການຮຽນ-ການສອນ, ຜູ້ຮຽນ, ການຮຽນຮູ້ຂອງຜູ້ຮຽນ. ຂະບວນການ ຄວນອີງໃສ່ການຮຽນການສອນແບບຕັ້ງໜ້າ, ການສິດສອນໂດຍເອົານັກຮຽນເປັນໃຈກາງ. ການຮຽນຮູ້ຂອງຜູ້ຮຽນຕ້ອງໃຫ້ຄົບ 5ຫລັກມູນຄື: ຄຸນສົມບັດສຶກສາ, ປັນຍາສຶກສາ, ພະລະສຶກສາ, ສິລະປະສຶກສາ ແລະ ແຮງງານສຶກສາ.

(3) ພັດທະນາ ລະບົບຮັບປະກັນຄຸນນະພາບ ສຳລັບສາຍອາຊີວະສຶກສາ, ໃຫ້ມີ ມາດຕະຖານຄຸນນະພາບຂອງສະຖານສຶກສາ, ມີກົນໄກການປະເມີນຄຸນນະພາບ ນັບຕັ້ງແຕ່ ການປະເມີນຕົນເອງຂອງສະຖານສຶກສາ; ການປະເມີນພາຍໃນຂອງກົມອາຊີວະສຶກສາ; ການປະເມີນພາຍນອກຂອງພາກສ່ວນຮັບຮອງຄຸນນະພາບການສຶກສາ. ມາດຕະຖານຄຸນນະພາບຕ້ອງສ້າງເງື່ອນໄຂ ໃຫ້ສະຖານສຶກສາ ພັດທະນາຊັບພະຍາກອນມະນຸດ ທີ່ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ, ຕິດພັນກັບວິຊາຊີບ ແລະ ມາດຖານອາຊີບ.

(4) ພັດທະນາ ລະບົບຮັບປະກັນຄຸນນະພາບ ສຳລັບການສຶກສາຊັ້ນສູງ, ໃຫ້ມີ ມາດຕະຖານຕໍ່າສຸດສຳລັບສະຖານສຶກສາ ເພື່ອການກວດສອບສະຖານສຶກສາ ແລະກ່ຽວເນື່ອງໄປເຖິງການອະນຸມັດສ້າງຕັ້ງ ສະຖານສຶກສາ; ໃຫ້ມີມາດຕະຖານສຳລັບ ສາຍວິຊາ (ໂປຣແກຣມ) ເພື່ອການປະເມີນຄຸນນະພາບ ແລະ ກົນໄກການປະເມີນ ນັບຕັ້ງແຕ່ ການປະເມີນຕົນເອງຂອງວິທະຍາໄລ ຫລື ຂອງຄະນະໃດໜຶ່ງ ໃນມະຫາວິທະຍາໄລ; ການປະເມີນພາຍໃນຂອງກົມການສຶກສາຊັ້ນສູງ ຫລືຂອງມະຫາວິທະຍາໄລ; ແລະ ການປະເມີນພາຍນອກຂອງພາກສ່ວນຮັບຮອງຄຸນນະພາບ. ມາດຕະຖານຄຸນນະພາບຂອງການສຶກສາຊັ້ນສູງຕ້ອງສ້າງເງື່ອນໄຂ ໃຫ້ວິທະຍາໄລ ແລະ ມະຫາວິທະຍາໄລ ພັດທະນາຊັບພະຍາກອນມະນຸດ ທີ່ເປັນນັກວິຊາການ, ນັກວິທະຍາສາດ, ນັກຄົ້ນຄວ້າ, ໃຫ້ສະຖາບັນ ໄດ້ມີຜົນງານການຄົ້ນຄວ້າວິໄຈ ອອກຮັບໃຊ້ສັງຄົມ.

(5) ພັດທະນາ ລະບົບຮັບປະກັນຄຸນນະພາບ ສຳລັບສະຖາບັນສ້າງຄູ, ໃຫ້ມີ ມາດຕະຖານສຳລັບສາຍສ້າງຄູໃນແຕ່ລະລະບົບ ລວມເຖິງຄະນະສຶກສາສາດໃນມະຫາວິທະຍາໄລ; ມີກົນໄກໃນການປະເມີນຕົນເອງຂອງສະຖາບັນສ້າງຄູ ແລະ ຄະນະສຶກສາສາດ, ການປະເມີນພາຍໃນຂອງກົມສ້າງຄູ ແລະມະຫາວິທະຍາໄລທີ່ມີຄະນະສຶກສາສາດ ແລະການປະເມີນພາຍນອກຂອງພາກສ່ວນຮັບຮອງຄຸນນະພາບ. ພັດທະນາມາດຕະຖານຂອງຫລັກສູດການບຳລຸງ/ເຝິກອົບຮົມຄູ, ມີລະບົບການລົງທະບຽນການບຳລຸງ/ເຝິກອົບຮົມຄູ ເພື່ອການຄຸ້ມຄອງທີ່ມີປະສິດທິພາບ ແລະການທຽບໂອນລະຫວ່າງການບຳລຸງ/ເຝິກອົບຮົມ ກັບໜ່ວຍກິດໃນສະຖາບັນສ້າງຄູ.

(6) ພັດທະນາ ລະບົບຮັບປະກັນຄຸນນະພາບ ສຳລັບສາຍນອກລະບົບ, ໃຫ້ມີມາດຕະຖານຫລັກສູດການບຳລຸງ ເພື່ອການປະເມີນ ແລະ ຄຸ້ມຄອງຄຸນນະພາບ. ໃຫ້ມີຫລັກການໃນການທຽບໂອນ ໃຫ້ຜູ້ທີ່ຈົບການບຳລຸງ ໃນສາຍນອກລະບົບ ສາມາດເຊື່ອມຕໍ່ ເຂົ້າຮຽນສາຍໃນລະບົບ.

(7) ພັດທະນາຂອບຄ່າຍມາດຕະຖານຄຸນວຸດທິ ໂດຍກວມເອົາການສຶກສາຂັ້ນພື້ນຖານ, ການບຳລຸງ/ເຝິກອົບຮົມ, ອາຊີວະສຶກສາ ແລະການສຶກສາຊັ້ນສູງ. ມີມາດຕະຖານ ໃນແຕ່ລະລະດັບຄຸນວຸດທິ ເພື່ອເປັນເງື່ອນໄຂ ໃນການທຽບໂອນໜ່ວຍກິດ ແລະການເຊື່ອມໂຍງຄຸນວຸດທິ ເຂົ້າກັບພາກພື້ນ ແລະສາກົນ.

## 2.3 ເນື້ອໃນຂອງແຜນຍຸດທະສາດ

ເພື່ອບັນລຸ ບັນດາຄາດໝາຍລວມ, ແຜນຍຸດທະສາດໄດ້ຖືກກຳນົດດ້ວຍ 7 ອົງປະກອບຫລັກ. ແຕ່ລະອົງປະກອບ ມີຫລັກການ ເພື່ອຊີ້ບອກເຖິງທິດທາງ ຫລືແນວຄວາມຄິດພື້ນຖານຂອງແຕ່ລະຍຸດທະສາດ. ມັນເປັນບ່ອນອີງໃຫ້ແກ່ບັນດາຜູ້ມີສ່ວນຮ່ວມ ໃນການປະຕິບັດ ແຕ່ລະຍຸດທະສາດໄດ້ງ່າຍຂຶ້ນ ແລະໄປຕາມທິດທາງ ທີ່ເປັນເອກະພາບກັນ.




### 2.3.1 ປັບປຸງລະບົບການສອບເສັງ, ທົດສອບ ແລະແຂ່ງຂັນທາງດ້ານການສຶກສາ

- ພັດທະນາ ມາດຕະຖານການຮຽນຮູ້ຂອງນັກຮຽນ ໃນແຕ່ລະຂັ້ນ, ແຕ່ລະຊັ້ນ
- ພັດທະນາ ໂຄງສ້າງຫົວບົດສອບເສັງ, ຫົວບົດທົດສອບ ແລະ ຫົວບົດແຂ່ງຂັນ
- ພັດທະນາ ຄັງຂໍ້ສອບສຳລັບແຕ່ລະວິຊາ ແລະ ກົນໄກການສະສົມຂໍ້ສອບ
- ທົບທວນຄືນ ລະບຽບການສອບເສັງຈົບຊັ້ນປະຖົມ, ມັດທະຍົມ ແລະເສັງເຂົ້າຮຽນຕໍ່
- ທົບທວນຄືນ ຈຸດປະສົງ ແລະຂັ້ນຕອນການທົດສອບຄວາມຮູ້ນັກຮຽນຊັ້ນປະຖົມ (ປ.3, 5)
- ພັດທະນາ ລະບົບການທົດສອບຄວາມຮູ້ນັກຮຽນຊັ້ນມັດທະຍົມ (ມ4, 7)
- ສົ່ງເສີມການແຂ່ງຂັນນັກຮຽນເກັ່ງໃນທຸກໆປີ

### 2.3.2 ພັດທະນາລະບົບຮັບປະກັນຄຸນນະພາບສຳລັບກ່ອນໄວຮຽນ ແລະ ສາມັນສຶກສາ

- ພັດທະນາ ມາດຕະຖານຄຸນນະພາບສຳລັບໂຮງຮຽນອະນຸບານ
- ທົບທວນຄືນ ມາດຕະຖານຄຸນນະພາບສຳລັບໂຮງຮຽນປະຖົມ
- ພັດທະນາ ກົນໄກການປະເມີນຕົນເອງ, ປະເມີນພາຍໃນ ແລະພາຍນອກ

- ພັດທະນາ ລະບຽບຫລັກການ ສະໜອງງົບປະມານໃຫ້ໂຮງຮຽນ ປັບປຸງຄຸນນະພາບ
- ພັດທະນາ ລະບຽບຫລັກການ ເພື່ອຮັບຮອງຄຸນນະພາບໂຮງຮຽນປະຖົມ ແລະອະນຸບານ

2.3.3 ພັດທະນາລະບົບຮັບປະກັນຄຸນນະພາບສຳລັບສະຖານອາຊີວະສຶກສາ
- ພັດທະນາ ມາດຕະຖານຄຸນນະພາບສຳລັບສະຖານອາຊີວະສຶກສາ
- ພັດທະນາ ກົນໄກການປະເມີນຕົນເອງ, ປະເມີນພາຍໃນ ແລະພາຍນອກ
- ພັດທະນາ ລະບຽບຫລັກການ ເພື່ອຮັບຮອງຄຸນນະພາບ ສະຖານອາຊີວະສຶກສາ

2.3.4 ພັດທະນາລະບົບຮັບປະກັນຄຸນນະພາບສຳລັບການສຶກສາຊັ້ນສູງ
- ພັດທະນາ ມາດຕະຖານຕ່ຳສຸດສຳລັບສະຖານການສຶກສາຊັ້ນສູງ
- ພັດທະນາ ລະບຽບຫລັກການກວດສອບ / ອະນຸມັດສ້າງຕັ້ງສະຖານການສຶກສາຊັ້ນສູງ
- ພັດທະນາ ມາດຕະຖານສຳລັບ ສາຍວິຊາ (ໂປຣແກຣມ)
- ພັດທະນາ ກົນໄກການປະເມີນຕົນເອງ, ປະເມີນພາຍໃນ ແລະພາຍນອກ
- ພັດທະນາ ລະບຽບຫລັກການ ເພື່ອຮັບຮອງຄຸນນະພາບ ສະຖານການສຶກສາຊັ້ນສູງ

2.3.5 ພັດທະນາລະບົບຮັບປະກັນຄຸນນະພາບສຳລັບສະຖາບັນສ້າງຄູ
- ພັດທະນາ ມາດຕະຖານສຳລັບແຕ່ລະລະບົບກໍ່ສ້າງຄູ ແລະ ຄະນະສຶກສາສາດ
- ພັດທະນາ ກົນໄກການປະເມີນຕົນເອງ, ປະເມີນພາຍໃນ ແລະພາຍນອກ
- ພັດທະນາ ມາດຕະຖານຂອງຫລັກສູດ ການບຳລຸງ/ເຝິກອົບຮົມຄູ
- ພັດທະນາ ລະບົບການລົງທະບຽນການບຳລຸງ/ເຝິກອົບຮົມຄູ
- ພັດທະນາ ລະບຽບຫລັກການທຽບໂອນ ລະຫວ່າງການບຳລຸງ/ເຝິກອົບຮົມ ກັບໜ່ວຍກິດໃນສະຖາບັນສ້າງຄູ.

2.3.6 ພັດທະນາລະບົບຮັບປະກັນຄຸນນະພາບສຳລັບສາຍນອກລະບົບ
- ພັດທະນາ ມາດຕະຖານຫລັກສູດການບຳລຸງ
- ພັດທະນາ ຫລັກການໃນການທຽບໂອນ ໃຫ້ຜູ້ທີ່ຈົບການບຳລຸງ ເຊື່ອມຕໍ່ເຂົ້າລະບົບ

2.3.7 ພັດທະນາຂອບຄ່າຍມາດຕະຖານຄຸນວຸດທິ
- ພັດທະນາ ຂອບຄ່າຍມາດຕະຖານຄຸນວຸດທິ
- ພັດທະນາ ຫລັກການທຽບໂອນໜ່ວຍກິດ, ການຢັ້ງຢືນໃບປະກາດລະຫວ່າງສະຖາບັນ

# ພາກທີ III. ແຜນດຳເນີນງານ

ແຜນດຳເນີນງານ ເພື່ອປະຕິບັດແຜນຍຸດທະສາດຮັບປະກັນຄຸນນະພາບການສຶກສານີ້ ໄດ້ຖືກຈັດແບ່ງອອກເປັນ 2ໄລຍະຄື: ໄລຍະທີ1 ແຕ່ປີ2011-2015 ແລະ ໄລຍະທີ2 ແຕ່ປີ2016-2020. ການຈັດແບ່ງຈະອີງຕາມ ບູລິມະສິດຄວາມຮີບດ່ວນ, ຄວາມກຽມພ້ອມຂອງບຸກຄະລາກອນ, ຄວາມສາມາດໃນການຊອກຫາແຫລ່ງທຶນ ແລະອື່ນໆ.

ຕາຕະລາງ 3.1 ພາກສ່ວນກ່ຽວຂ້ອງ ໃນແຕ່ລະຍຸດທະສາດ

| ລຳດັບ | ຍຸດທະສາດ | ພາກສ່ວນກ່ຽວຂ້ອງຫລັກ | ຄູ່ຮ່ວມພັດທະນາ |
|---|---|---|---|
| 1 | ປັບປຸງລະບົບການສອບເສັງ, ທົດສອບ ແລະແຂ່ງຂັນທາງດ້ານການສຶກສາ | ປະຖົມ, ມັດທະຍົມ, ສວສ, ຊັ້ນສູງ, ອາຊີວະ, ສປຄ | |
| 2 | ພັດທະນາລະບົບຮັບປະກັນຄຸນນະພາບ ສຳລັບກ່ອນໄວຮຽນ ແລະສາມັນສຶກສາ | ປະຖົມ, ມັດທະຍົມ, ສປຄ, ແຂວງ, ເມືອງ | |
| 3 | ພັດທະນາລະບົບຮັບປະກັນຄຸນນະພາບ ສຳລັບ ສະຖານອາຊີວະສຶກສາ | ອາຊີວະ, ສປຄ, ວິທະຍາໄລ | UNESCO<br>ADB |
| 4 | ພັດທະນາລະບົບຮັບປະກັນຄຸນນະພາບ ສຳລັບການສຶກສາຊັ້ນສູງ | ຊັ້ນສູງ, ຄສອ, ສປຄ, ມະຫາວິທະຍາໄລ, ວິທະຍາໄລ | ADB |
| 5 | ພັດທະນາລະບົບຮັບປະກັນຄຸນນະພາບ ສຳລັບສະຖາບັນສ້າງຄູ | ສ້າງຄູ, ສປຄ, ສະຖາບັນສ້າງຄູ | |
| 6 | ພັດທະນາລະບົບຮັບປະກັນຄຸນນະພາບ ສຳລັບສາຍນອກລະບົບ | ນອກລະບົບ, ປະຖົມ, ມັດທະຍົມ, ສວສ, ສປຄ | |
| 7 | ພັດທະນາຂອບມາດຕະຖານຄຸນວຸດທິ | ຈັດຕັ້ງ, ຊັ້ນສູງ, ອາຊີວະ, ສປຄ, ກະຊວງແຮງງານ | |

ຕາຕະລາງ 3.2 ໄລຍະເວລາຂອງການດຳເນີນງານ[1]




[1] ເສັ້ນເມັດແມ່ນໄດ້ກະກຽມຈຳນວນໜຶ່ງ, ເສັ້ນເຕັມແມ່ນດຳເນີນໃນໄລຍະທີ1 ແລະເສັ້ນຂາດແມ່ນໃນໄລຍະທີ2

ຄາດໝາຍ:

- ມີມາດຕະຖານການຮຽນຮູ້ ສຳລັບບາງວິຊາຫລັກ, ເພື່ອເປັນບ່ອນອີງ ໃນການພັດທະນາໂຄງສ້າງຫົວບົດ, ຂໍ້ສອບ ແລະ ຄັງຂໍ້ສອບ ເພື່ອສະໜອງໃຫ້ກັບການສອບເສັງ, ທົດສອບ ແລະ ແຂ່ງຂັນ
- ມີລະບຽບຫລັກການໃນການເສັງຈົບຊັ້ນປະຖົມ, ມັດທະຍົມ ແລະເສັງເຂົ້າຮຽນຕໍ່ ຢ່າງເປັນລະບົບ
- ມີວິທີການທົດສອບຄວາມຮູ້ນັກຮຽນ ທີ່ຊັດເຈນ, ວ່ອງໄວ, ກະທັດຮັດໄດ້ຕາມຈຸດປະສົງ. ການທົດສອບໄດ້ປະຕິບັດເພີ່ມ ໃນຊັ້ນປ.3 ແລະມັດທະຍົມ
- ມີມາດຕະຖານຄຸນນະພາບ ສຳລັບອະນຸບານ ແລະສາມັນສຶກສາ, ພ້ອມທັງກົນໄກການປະເມີນຄຸນນະພາບ, ປັບປຸງຄຸນນະພາບ ແລະ ຮັບຮອງຄຸນນະພາບ
- ມີມາດຕະຖານຄຸນນະພາບ ສຳລັບອາຊີວະສຶກສາ, ພ້ອມທັງກົນໄກການປະເມີນຄຸນນະພາບ, ປັບປຸງຄຸນນະພາບ ແລະ ຮັບຮອງຄຸນນະພາບ
- ມີມາດຕະຖານຄຸນນະພາບຕໍ່າສຸດ ສຳລັບສະຖານການສຶກສາຊັ້ນສູງ ແລະກົນໄກການກວດສອບ ແລະ ອະນຸມັດສ້າງຕັ້ງ
- ມີມາດຕະຖານຄຸນນະພາບ ສຳລັບສາຍວິຊາ ໃນການສຶກສາຊັ້ນສູງ, ພ້ອມທັງກົນໄກການປະເມີນຄຸນນະພາບ, ປັບປຸງຄຸນນະພາບ ແລະ ຮັບຮອງຄຸນນະພາບຂອງສາຍວິຊາ
- ມີມາດຕະຖານຄຸນນະພາບ ສຳລັບສະຖາບັນສ້າງຄູ ແລະຄະນະສຶກສາສາດ, ພ້ອມທັງກົນໄກການປະເມີນຄຸນນະພາບ, ປັບປຸງຄຸນນະພາບ ແລະ ຮັບຮອງຄຸນນະພາບ
- ມີມາດຕະຖານຂອງຫລັກສູດບຳລຸງ/ເຝິກອົບຮົມ ແລະກົນໄກໃນການທຽບໂອນໜ່ວຍກິດ
- ມີມາດຕະຖານຂອງຫລັກສູດບຳລຸງສາຍນອກລະບົບ ແລະຫລັກການເຊື່ອມຕໍ່ເຂົ້າລະບົບ
- ມີຂອບຄ່າຍມາດຕະຖານຄຸນວຸດທິ ເພື່ອເປັນບ່ອນອີງໃຫ້ແກ່ການທຽບໂອນ ແລະຢັ້ງຢືນໃບປະກາດ

ໂຄງການທີ 1. ປັບປຸງລະບົບການສອບເສັງ, ທົດສອບ ແລະແຂ່ງຂັນທາງດ້ານການສຶກສາ

- ພັດທະນາ ມາດຕະຖານການຮຽນຮູ້ ທຸກວິຊາໃນຊັ້ນປະຖົມ
- ພັດທະນາ ມາດຕະຖານການຮຽນຮູ້ ທຸກວິຊາໃນຊັ້ນມັດທະຍົມ (ໄລຍະທີ2)
- ພັດທະນາ ໂຄງສ້າງຫົວບົດສອບເສັງຈົບຊັ້ນປະຖົມ,ມັດທະຍົມ, ເຂົ້າຮຽນຕໍ່
- ພັດທະນາ ໂຄງສ້າງຫົວບົດທົດສອບຂັ້ນ ປ.3, ປ.5 ແລະ ມ.4
- ພັດທະນາ ໂຄງສ້າງຫົວບົດທົດສອບຂັ້ນ ມ.7 (ໄລຍະທີ2)
- ພັດທະນາ ຄັງຂໍ້ສອບສຳລັບ ບາງວິຊາຫລັກ
- ທົບທວນຄືນ ລະບຽບການສອບເສັງຈົບຊັ້ນປະຖົມ, ມັດທະຍົມ ແລະ ເສັງເຂົ້າຮຽນຕໍ່
- ທົບທວນຄືນ ຈຸດປະສົງ ແລະຂັ້ນຕອນການທົດສອບຄວາມຮູ້ນັກຮຽນ ຊັ້ນປະຖົມ
- ພັດທະນາ ລະບົບການທົດສອບຄວາມຮູ້ນັກຮຽນ ຊັ້ນມັດທະຍົມ (ໄລຍະທີ2)
- ຈັດການແຂ່ງຂັນນັກຮຽນເກັ່ງລະດັບປະຖົມ, ມັດທະຍົມ ໃນລະດັບປະເທດ
- ຈັດການແລກປ່ຽນຖອດຖອນບົດຮຽນ ກ່ຽວກັບການແຂ່ງຂັນໃນພາກພື້ນ ແລະສາກົນ

ໂຄງການທີ 2. ພັດທະນາລະບົບຮັບປະກັນຄຸນນະພາບ ສຳລັບກ່ອນໄວຮຽນ ແລະສາມັນສຶກສາ

- ພັດທະນາ ມາດຕະຖານຄຸນນະພາບການສຶກສາ ຊັ້ນອະນຸບານ
- ພັດທະນາ ມາດຕະຖານຄຸນນະພາບການສຶກສາ ຊັ້ນປະຖົມສຶກສາ
- ພັດທະນາ ກົນໄກການປະເມີນຕົນເອງ, ການປະເມີນພາຍໃນ ແລະພາຍນອກ
- ສ້າງຄວາມເຂັ້ມແຂງໃຫ້ໂຮງຮຽນໃນການປະເມີນຕົນເອງ, ຂື້ນແຜນປັບປຸງຄຸນນະພາບ
- ສ້າງຄວາມເຂັ້ມແຂງໃຫ້ ຄະນະກຳມະການພັດທະນາການສຶກສາຂັ້ນບ້ານ ໃນການຕິດຕາມຄຸນນະພາບຂອງໂຮງຮຽນ ແລະ ຊີ້ນຳການປັບປຸງຄຸນນະພາບ
- ປັບປຸງພາລະບົດບາດຂອງຫ້ອງການສຶກສາທິການເມືອງ ແລະ ພະແນກສຶກສາທິການແຂວງ ໃນການປະເມີນຄຸນນພາບພາຍໃນ ສຳລັບຊັ້ນປະຖົມ ແລະ ອະນຸບານ
- ສ້າງຕັ້ງສະພາຮັບຮອງຄຸນນະພາບຂອງໂຮງຮຽນ ໃນຊັ້ນປະຖົມ ແລະ ອານຸບານ ແລະ ພັດທະນາ ຂັ້ນຕອນໃນການຮັບຮອງ (ໄລຍະທີ2)

ໂຄງການທີ 3. ພັດທະນາ ລະບົບຮັບປະກັນຄຸນນະພາບ ສຳລັບສະຖານອາຊີວະສຶກສາ

- ພັດທະນາ ມາດຕະຖານຄຸນນະພາບສຳລັບສະຖານອາຊີວະສຶກສາ
- ພັດທະນາ ກົນໄກການປະເມີນຕົນເອງ, ປະເມີນພາຍໃນ ແລະພາຍນອກ
- ສ້າງຕັ້ງໜ່ວຍງານຮັບປະກັນຄຸນນະພາບ ໃນສະຖານອາຊີວະສຶກສາ
- ສ້າງຄວາມເຂັ້ມແຂງໃຫ້ ສະຖານອາຊີວະສຶກສາ ໃນການປະເມີນຕົນເອງ
- ຈັດຕັ້ງການປະເມີນພາຍໃນ ໂດຍຄະນະປະເມີນທີ່ມາຈາກ ຫລາຍສະຖານສຶກສາ
- ສ້າງຕັ້ງສະພາຮັບຮອງຄຸນນະພາບສຳລັບອາຊີວະສຶກສາ ໂດຍມີສູນຮັບປະກັນຄຸນນະພາບເປັນເສນາທິການ
- ຈັດເຝິກອົບຮົມໃຫ້ຜູ້ປະເມີນພາຍນອກ
- ຈັດຕັ້ງການປະເມີນພາຍນອກ

ໂຄງການທີ 4. ພັດທະນາ ລະບົບຮັບປະກັນຄຸນນະພາບ ສຳລັບການສຶກສາຊັ້ນສູງ

- ພັດທະນາ ມາດຕະຖານຕ່ຳສຸດ ສຳລັບສະຖານການສຶກສາຊັ້ນສູງ
- ພັດທະນາ ລະບຽບຫລັກການກວດສອບ / ອະນຸມັດສ້າງຕັ້ງ ສະຖານການສຶກສາຊັ້ນສູງ
- ພັດທະນາ ມາດຕະຖານສຳລັບສາຍວິຊາ (ໂປຣແກຣມ)
- ພັດທະນາ ກົນໄກການປະເມີນຕົນເອງ, ປະເມີນພາຍໃນ ແລະພາຍນອກ
- ສ້າງຕັ້ງໜ່ວຍງານຮັບປະກັນຄຸນນະພາບ ໃນວິທະຍາໄລ ແລະໃນລະດັບຄະນະ ຂອງມະຫາວິທະຍາໄລ
- ສ້າງຄວາມເຂັ້ມແຂງໃຫ້ ສະຖານສຶກສາ ໃນການປະເມີນຕົນເອງ
- ຈັດຕັ້ງການປະເມີນພາຍໃນ ໂດຍຄະນະປະເມີນທີ່ມາຈາກ ຄະນະແລະ ວິທະຍາໄລອື່ນ

- ສ້າງຕັ້ງສະພາຮັບຮອງຄຸນນະພາບສຳລັບການສຶກສາຊັ້ນສູງ ໂດຍມີສູນຮັບປະກັນຄຸນນະພາບເປັນເສນາທິການ
- ຈັດເຝິກອົບຮົມໃຫ້ຜູ້ປະເມີນພາຍນອກ
- ຈັດຕັ້ງການປະເມີນພາຍນອກ

ໂຄງການທີ 5. ພັດທະນາ ລະບົບຮັບປະກັນຄຸນນະພາບ ສຳລັບສະຖາບັນສ້າງຄູ

- ພັດທະນາ ມາດຕະຖານຄຸນນະພາບສຳລັບ ສະຖາບັນສ້າງຄູ ແລະ ຄະນະສຶກສາສາດ
- ພັດທະນາ ກົນໄກການປະເມີນຕົນເອງ, ປະເມີນພາຍໃນ ແລະພາຍນອກ
- ສ້າງຕັ້ງໜ່ວຍງານຮັບປະກັນຄຸນນະພາບ ໃນສະຖາບັນສ້າງຄູ ແລະ ຄະນະສຶກສາສາດ
- ສ້າງຄວາມເຂັ້ມແຂງໃຫ້ ສະຖາບັນສ້າງຄູ ແລະຄະນະສຶກສາສາດໃນການປະເມີນຕົນເອງ
- ຈັດຕັ້ງການປະເມີນພາຍໃນ ໂດຍຄະນະປະເມີນທີ່ມາຈາກ ຫລາຍສະຖາບັນ
- ພັດທະນາ ມາດຕະຖານຂອງຫລັກສູດການບຳລຸງ/ເຝິກອົບຮົມຄູ
- ພັດທະນາ ລະບົບລົງທະບຽນ ການບຳລຸງ/ເຝິກອົບຮົມຄູ ເພື່ອການຄຸ້ມຄອງທີ່ທົ່ວເຖິງ
- ພັດທະນາ ລະບຽບຫລັກການ ໃນການທຽບໂອນ ລະຫວ່າງການບຳລຸງ/ເຝິກອົບຮົມຄູ ກັບໜ່ວຍກິດໃນສະຖາບັນສ້າງຄູ
- ສ້າງຕັ້ງສະພາຮັບຮອງຄຸນນະພາບສຳລັບສະຖາບັນສ້າງຄູ (ໄລຍະທີ2)
- ຈັດເຝິກອົບຮົມໃຫ້ຜູ້ປະເມີນພາຍນອກ (ໄລຍະທີ2)
- ຈັດຕັ້ງການປະເມີນພາຍນອກ (ໄລຍະທີ2)

ໂຄງການທີ 6. ພັດທະນາ ລະບົບຮັບປະກັນຄຸນນະພາບສຳລັບສາຍນອກລະບົບ

- ພັດທະນາ ມາດຕະຖານຫລັກສູດການບຳລຸງ
- ພັດທະນາ ຫລັກການໃນການທຽບໂອນ ແລະ ເຊື່ອມຕໍ່ເຂົ້າລະບົບ

ໂຄງການທີ 7. ພັດທະນາ ຂອບຄ່າຍມາດຕະຖານຄຸນວຸດທິ

- ພັດທະນາຂອບມາດຕະຖານຄຸນວຸດທິ
- ພັດທະນາລະບຽບຫລັກການ ເພື່ອການທຽບໂອນໜ່ວຍກິດ (ໄລຍະທີ2)
- ພັດທະນາລະບຽບຫລັກການ ເພື່ອການທຽບໃບຍັ້ງຢືນ/ໃບປະກາດສະນີຍະບັດ (ໄລຍະທີ2)

# ພາກທີ IV. ວິທີການໃນການຈັດຕັ້ງປະຕິບັດ

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດບັນດາທິດທາງ, ຄາດໝາຍສູ້ຊົນທີ່ກຳນົດໄວ້ ໃນແຜນຍຸດທະສາດ ແລະ ແຜນດຳເນີນງານການຮັບປະກັນຄຸນນະພາບການສຶກສາ ໃຫ້ສຳເລັດຜົນນັ້ນ, ທຸກພາກສ່ວນທີ່ກ່ຽວຂ້ອງ ຕ້ອງໄດ້ປະສານສົມທົບກັນຢ່າງແໜ້ນແຟ້ນ ແລະ ແບ່ງຄວາມຮັບຜິດຊອບໃຫ້ແຕ່ລະພາກສ່ວນດັ່ງລຸ່ມນີ້:

1) ສູນຮັບປະກັນຄຸນນະພາບການສຶກສາ ສົມທົບກັບພາກສ່ວນກ່ຽວຂ້ອງ ຮ່າງຄຳສັ່ງກ່ຽວກັບການຮັບປະກັນຄຸນນະພາບການສຶກສາ, ຮ່າງຄຳສັ່ງແນະນຳ ແລະ ເຜີຍແຜ່ກ່ຽວກັບການຈັດຕັ້ງປະຕິບັດ ແຜນຍຸດທະສາດສະບັບນີ້.
2) ບັນດາກົມ ແລະ ສູນທີ່ກ່ຽວຂ້ອງອ້ອມຂ້າງກະຊວງສຶກສາທິການ, ພະແນກສຶກສາປະຈຳແຂວງ, ນະຄອນຫລວງ, ຫ້ອງການສຶກສາປະຈຳເມືອງ, ການສຶກສາທັງພາກລັດ ແລະ ພາກ ເອກະຊົນ ມີໜ້າທີ່ນຳເອົາແຜນຍຸດທະສາດ ແລະ ແຜນດຳເນີນງານສະບັບນີ້ ໄປຜັນ ຂະຫຍາຍເປັນແຜນການລະອຽດໃນຂັ້ນຂອງຕົນ ຕາມຫນ້າທີ່ ແລະ ຂອບເຂດສິດທີ່ໄດ້ ກຳນົດ.
3) ສະຖານສຶກສາທັງພາກລັດ ແລະ ພາກເອກະຊົນ ມີໜ້າທີ່ວາງແຜນພັດທະນາໂຮງຮຽນເພື່ອ ປັບປຸງຄຸນນະພາບການສຶກສາຂອງຕົນ ຕາມລະບົບການຮັບປະກັນຄຸນນະພາບພາຍໃນ, ພ້ອມທັງໃຫ້ມີການປະເມີນຈາກພາຍນອກ ເພື່ອຈະໄດ້ຮັບຮອງມາດຕະຖານຄຸນນະພາບການສຶກສາ.
4) ກະຊວງສຶກສາທິການ ສົມທົບກັບກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ໃນການໂຄສະນາເຜີຍແຜ່ນິຕິກຳ ລະບຽບຫລັກການ ລວມໄປເຖິງຂໍ້ມູນ ແລະ ເອກະສານຕ່າງໆທີ່ກ່ຽວພັນກັບ ແຜນຍຸດທະສາດ ສະບັບນີ້, ຮັບປະກັນໃຫ້ສັງຄົມຮັບຮູ້ເຖິງສະພາບຕົວຈິງ ແລະວິທີການ ຂອງການຮັບປະກັນຄຸນນະພາບການສຶກສາຂອງຊາດ.
5) ກະຊວງສຶກສາທິການ ມີໜ້າທີ່ຊີ້ນຳ, ຕິດຕາມ, ກວດກາ ແລະ ຕີລາຄາການຈັດຕັ້ງປະຕິບັດ ແຜນຍຸດທະສາດ ການຮັບປະກັນຄຸນນະພາບການສຶກສາ, ເພື່ອສົ່ງເສີມ ແລະ ຍ້ອງຍໍຊົມເຊີຍ ການຈັດຕັ້ງ, ສະຖານສຶກສາ ແລະ ບຸກຄົນທີ່ມີຜົນງານດີເດັ່ນ.
6) ແຫລ່ງທຶນໃນການຈັດຕັ້ງປະຕິບັດ ແຜນຍຸດທະສາດ ແລະ ແຜນດຳເນີນງານການຮັບປະກັນ ຄຸນນະພາບການສຶກສາ ແມ່ນໄດ້ມາຈາກງົບປະມານຂອງລັດ, ລາຍຮັບວິຊາການໃນການ ປະກັນຄຸນນະພາບ, ການປະກອບສ່ວນ ຂອງພາກເອກະຊົນ, ສັງຄົມ, ການປະກອບສ່ວນ ຂອງອົງການຈັດຕັ້ງສາກົນ, ການຊ່ວຍເຫລືອລ້າຂອງຕ່າງປະເທດ.